ສະພາວິທະຍາສາດສັງຄົມ ແຫ່ງຊາດ



# ກະຕິບ

## ບາງບັນຫາເສດຖະສາດ ກ່ຽວກັບ ການພັດທະນາ ຢູ່ ສປປ ລາວ



ຜູ້ຂຽນ ແລະຮຽບຮຽງ
ເຈືອງ ສິມບູນຂັນ

2013

ສະພາວິທະຍາສາດສັງຄົມແຫ່ງຊາດ

# ກະຕິບ

# ບາງບັນຫາເສດຖະສາດ
# ກ່ຽວກັບການພັດທະນາຢູ່ ສປປ ລາວ


**ຜູ້ຂຽນ ແລະ ຮຽບຮຽງ**

ເຈືອງ ສົມບູນຂັນ

ປະລິນຍາໂທວິຊາເສດຖະສາດການເມືອງ
ຈາກມະຫາວິທະຍາໄລແຫ່ງລັດເບລາຣູສ (Belarussia)
ສະຫະພາບໂຊວຽດ, ປີ 1983



- 2013 -

# ກະຕິບບາງບັນຫາເສດຖະສາດ
# ກ່ຽວກັບການພັດທະນາ ຢູ່ ສປປ ລາວ


ອອກແບບໜ້າປົກ ໂດຍ : ນາງ ດວງແຂ ບຸນຍາວົງ

ພິມຄັ້ງແຮກ : ປີ 2013 ຈຳນວນ 1.000 ເຫຼັ້ມ

212 ໜ້າ ຂະໜາດ 14.5 x 20.5 ຊມ

ຈັດພິມໂດຍ :

ສະພາວິທະຍາສາດສັງຄົມແຫ່ງຊາດ

ພິມທີ່ໂຮງພິມແຫ່ງລັດ

# ຄຳນຳ

ການສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975 ໄດ້ເຮັດໃຫ້ປະເທດເຮົາມີເອກະລາດ ມີເອກະພາບ ມີອຳນາດອະທິປະໄຕອັນຄົບຖ້ວນ ແລະ ມີສັນຕິພາບ, ຊຶ່ງໄດ້ເປັນເງື່ອນໄຂອັນອຳນວຍໃຫ້ແກ່ການພັດທະນາ.

ຕະຫລອດໄລຍະເກືອບ 40 ປີຜ່ານມາ, ໂດຍສະເພາະແມ່ນພາຍຫລັງທີ່ໄດ້ດຳເນີນການປ່ຽນແປງໃໝ່ຢ່າງມີຫລັກການ ແຕ່ປີ1986 ມານີ້, ການສ້າງສາພັດທະນາໄດ້ມີບັນຍາກາດໃໝ່ ແລະ ມີຜົນສຳເລັດໃໝ່ອັນສຳຄັນໃນຫລາຍດ້ານ; ຊຶ່ງໄດ້ເປັນເງື່ອນໄຂໃຫ້ແກ່ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນພົນລະເມືອງໃຫ້ດີຂຶ້ນ ເຮັດໃຫ້ສະຖຽນລະພາບການເມືອງມີຄວາມໜັກແໜ້ນ ແລະ ສັງຄົມມີຄວາມສະຫງົບປອດໄພ-ເປັນລະບຽບຮຽບຮ້ອຍ ໂດຍພື້ນຖານ.

ແຕ່ກໍຕ້ອງຮັບຮູ້ຕາມຄວາມເປັນຈິງວ່າ ບົນເສັ້ນທາງແຫ່ງການພັດທະນານັ້ນ ປະເທດເຮົາຍັງມີບັນຫາຈຳນວນໜຶ່ງທີ່ມີລັກສະນະທ້າທາຍທີ່ຕ້ອງໄດ້ແກ້ໄຂ ເປັນຕົ້ນແມ່ນບັນຫາຄວາມທຸກຍາກຂອງປະຊາຊົນ ກໍຄື ຂອງຄອບຄົວທີ່ຍັງມີອັດຕາສ່ວນສູງພໍສົມຄວນ, ບັນຫາການເຕີບໂຕຂອງເສດຖະກິດ ທີ່ຍັງບໍ່ທັນມີຄຸນນະພາບ ແລະ ຍັງບໍ່ທັນໄປຕາມທິດທີ່ຍືນຍົງ, ບັນຫາການຍົກສູງສະມັດຖະພາບການຜະລິດ ແລະ ປະສິດທິພາບຂອງເສດຖະກິດ ຕິດພັນກັບການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ; ບັນຫາການຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າ ແລະ ການບໍລິການສ້າງລາຍໄດ້ຂອງຄອບ

ຄິວ ລວມທັງບັນຫາທາງດ້ານການສຶກສາ ແລະ ສາທາລະນະສຸກ ທີ່ພົວພັນເຖິງການບັນລຸເປົ້າໝາຍສະຫັດສະວັດ ດ້ານການພັດທະນາ, ບັນຫາການພົວພັນຮ່ວມມື ແລະ ການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ; ນອກຈາກນັ້ນ ກໍມີບາງບັນຫາອື່ນໆອີກ...

ໃນປຶ້ມຫົວນີ້ ຜູ້ຂຽນໄດ້ພະຍາຍາມ**ສັງລວມເອົາແຕ່ບາງບັນຫາທາງດ້ານເສດຖະສາດເຂົ້າໄວ້ໃນ "ກະຕິບ" ຊຶ່ງແມ່ນພາຊະນະອັນເປັນເອກະລັກສຳລັບໃສ່ເຂົ້າໜຽວຂອງຄົນລາວເຮົາ. ສ່ວນບັນຫາຕ່າງໆທີ່ບັນຈຸຢູ່ໃນນັ້ນ ກໍລ້ວນແຕ່ກ່ຽວຂ້ອງກັບການພັດທະນາປະເທດເຮົາ; ຊຶ່ງຄວນໄດ້ຮັບການຄົ້ນຄວ້າ ແລະ ເຜີຍແຜ່ແນະນຳໃຫ້ກວ້າງຂວາງເພື່ອແລກປ່ຽນຄວາມຄິດ ແລະ ທັດສະນະກ່ຽວກັບທິດທາງວິທີການແກ້ໄຂນຳກັນ ແນໃສ່ເຮັດໃຫ້ການເຕີບໂຕຂອງເສດຖະກິດແຫ່ງຊາດມີຄຸນນະພາບ ແລະ ເຮັດໃຫ້ການພັດທະນາປະເທດເຮົາໄປຕາມທິດທີ່ຍືນຍົງ.**

ນອກຈາກບັນຫາເສດຖະສາດຈຳນວນ 7 ບົດ, ໃນ "ກະຕິບ" ນີ້ຍັງໄດ້ນຳສະເໜີບົດທີ VIII ກ່ຽວກັບເສດຖະສາດການເມືອງຂອງທ່ານ ມາກສ໌ ແລະ ທ່ານ ເລນິນ ຕື່ມອີກ. ຈຸດປະສົງຂອງການສະເໜີບົດນີ້ແມ່ນ ເພື່ອທົບທວນຄວາມຮູ້ກ່ຽວກັບເສດຖະສາດການເມືອງມາກຊິສ, ຊຶ່ງເປັນອົງປະກອບອັນໜຶ່ງທີ່ສຳຄັນຂອງທິດສະດີມາກສ໌-ເລນິນ. ບົດນີ້ໄດ້ປັບປຸງເພີ່ມເຕີມຈາກເອກະສານຄົ້ນຄວ້າຂອງປະທານໄກສອນ ພົມວິຫານ ຊຶ່ງຜູ້ຂຽນໄດ້ຄົ້ນຄວ້າສັງລວມໃຫ້ເພິ່ນໃນປີ 1987.

ຄວາມຄິດ ແລະ ທັດສະນະຄວາມຮັບຮູ້ທີ່ສະເໜີອອກໃນປຶ້ມນີ້ ສ່ວນໃຫຍ່ແມ່ນມາຈາກການຄົ້ນຄວ້າສັງລວມແນວທາງ-ນະໂຍບາຍ

ຂອງພັກ ແລະ ລັດເຮົາ; ລວມທັງບົດຮຽນຂອງຕ່າງປະເທດທີ່ຜູ້ຂຽນໄດ້ຄັດຈ້ອນເອົາມາຈາກເອກະສານຕ່າງໆ ໂດຍຈະເຫັນວ່າມັນຈະເປັນປະໂຫຍດ ສຳລັບການຄົ້ນຄວ້ານຳມາໝູນໃຊ້ເຂົ້າກັບເງື່ອນໄຂຈຸດພິເສດຂອງປະເທດເຮົາ.

ເນື່ອງຈາກວ່າ, ຈຸດປະສົງຂອງການຂຽນປຶ້ມຫົວນີ້**ບໍ່ແມ່ນເພື່ອໃຊ້ເປັນຫລັກສູດ ຫລື ຕຳລາ**ການຮຽນ-ການສອນ ແລະ ບໍ່ແມ່ນວິທະຍານິພົນ; ສະນັ້ນ ຜູ້ຂຽນຈຶ່ງບໍ່ໄດ້ເນັ້ນໜັກການໃຫ້ນິຍາມຄວາມໝາຍ ແລະ ການອະທິບາຍຊີ້ແຈງແບບວິຊາການ; ຍິ່ງໄປກວ່ານັ້ນແມ່ນບໍ່ໄດ້ເອົາຕົວເລກຂໍ້ມູນທາງວິທະຍາສາດ ແລະ ຫລັກມູນທິດສະດີຕົ້ນສຳນັກມາເປັນສິ່ງຢັ້ງຢືນ-ອ້າງອີງຫລາຍປານໃດ. ສ່ວນວິທີຂຽນ ກໍຂຽນແບບໃຫ້ຜູ້ອ່ານສາມາດເຂົ້າໃຈໄດ້ງ່າຍ ຕໍ່ແຕ່ລະບັນຫາທີ່ຍົກຂຶ້ນໂດຍບໍ່ໄດ້ຈັດລຽງເປັນລະບົບ "ໂລຊິກ" ເກາະກ່າຍກັນພໍປານໃດ.

ຜູ້ຂຽນເຂົ້າໃຈດີວ່າ ປຶ້ມຫົວນີ້ມີຍັງຫລາຍຈຸດຕ້ອງໄດ້ປັບປຸງເພີ່ມເຕີມ ເພື່ອໃຫ້ມີເນື້ອຫາສາລະສົມບູນ; ແຕ່ເຖິງຢ່າງໃດກໍເຊື່ອວ່າເມື່ອທ່ານໄດ້ອ່ານ ທ່ານຈະສຳພັດໄດ້ກ່ຽວກັບຄຸນ**ປະໂຫຍດຂອງມັນໃນດ້ານການແລກປ່ຽນ ຮຽນຮູ້ບັນຫາທາງເສດຖະສາດຈຳນວນໜຶ່ງກ່ຽວກັບການພັດທະນາຢູ່ ສປປ ລາວ ຂອງພວກເຮົາ.** ຍ້ອນແນວນັ້ນ ຜູ້ຂຽນຈຶ່ງຈິງໃຈໃສ່ຊື່ປຶ້ມຫົວນີ້ວ່າ **"ກະຕິບບາງບັນຫາເສດຖະເສດກ່ຽວກັບການພັດທະນາຢູ່ ສປປ ລາວ "**, ຊຶ່ງປຽບເໝືອນ "ກະຕິບ" **ທີ່ມີເຂົ້າໜຽວຮ້ອນໆຢູ່ໃນນັ້ນ** ຊຶ່ງຍາມໃດທ່ານຢາກກິນ ທ່ານກໍເປີດອອກ ແລະ ຈົກມາກິນໄດ້.

# ບົດທີ I

## ຄວາມດ້ອຍພັດທະນາຂອງປະເທດເຮົາ ແລະ ບັນຫາທ້າທາຍຈຳນວນໜຶ່ງ

ໃນໂລກປັດຈຸບັນເພິ່ນໄດ້ຈັດບັນດາປະເທດ ແລະ ເຂດແຄວ້ນອອກເປັນສອງກຸ່ມໃຫຍ່ ຄື: "**ກຸ່ມປະເທດທີ່ພັດທະນາແລ້ວ**" ແລະ "**ກຸ່ມປະເທດພວມ ຫລື ກຳລັງພັດທະນາ**". ຢູ່ໃນກຸ່ມປະເທດພວມພັດທະນາ ຍັງລວມເອົາປະເທດດ້ອຍພັດທະນາ 40 ກວ່າປະເທດເຂົ້ານຳ, ຊຶ່ງປະເທດເຮົາ ກໍຖືກຈັດເຂົ້າຢູ່ໃນກຸ່ມນີ້. ກຸ່ມປະເທດພວມພັດທະນາຍັງຖືກເອີ້ນໃນບາງກໍລະນີວ່າ "**ກຸ່ມປະເທດໂລກທີສາມ**", ຊຶ່ງລວມເອົາສ່ວນໃຫຍ່ຂອງບັນດາປະເທດສະມາຊິກອົງການສະຫະປະຊາຊາດ.

ການຈັດເອົາປະເທດນັ້ນ-ປະເທດນີ້ ເຂົ້າໃນສອງກຸ່ມໃຫຍ່ດັ່ງກ່າວນັ້ນ ລ້ວນແຕ່ແມ່ນອົງການສາກົນ ຫລື ອົງການລະຫວ່າງປະເທດເປັນຜູ້ຈັດ ໂດຍອີງໃສ່**ມາດຕະຖານສະເພາະ**ຂອງໃຜລາວ.

ເຊັ່ນ: **ອົງການສະຫະປະຊາຊາດ** ເຄີຍໄດ້ຈັດບັນດາປະເທດພວມພັດທະນາອອກເປັນກຸ່ມຍ່ອຍ 3 ກຸ່ມ ຄື:

**ກຸ່ມທີໜຶ່ງ:** ແມ່ນກຸ່ມປະເທດທີ່ທຸກຍາກ ຫລື ດ້ອຍພັດທະນາກວ່າໝູ່.

**ກຸ່ມທີສອງ:** ແມ່ນກຸ່ມປະເທດພວມພັດທະນາ ທີ່ບໍ່ໄດ້ສົ່ງນ້ຳມັນອອກຂາຍຕ່າງປະເທດ.

**ກຸ່ມທີສາມ:** ແມ່ນກຸ່ມປະເທດພວມພັດທະນາທີ່ສົ່ງນ້ຳມັນອອກຂາຍຕ່າງປະເທດ.

**ສ່ວນທະນາຄານໂລກ** ກໍອີງໃສ່ມາດຕະຖານຂອງຕົນຈັດເອົາທັງໝົດປະເທດທີ່ພັດທະນາແລ້ວ ແລະ ພວມພັດທະນາເຂົ້າໃນລະບົບການຈັດກຸ່ມລວມນຳກັນ, ຊຶ່ງໃນນັ້ນ ແຕ່ລະປະເທດຕ້ອງມີປະຊາກອນເກີນໜຶ່ງລ້ານຄົນຂຶ້ນໄປ. ຈາກນັ້ນ ກໍເອົາ**ລາຍໄດ້ສະເລ່ຍຕໍ່ຄົນມາເປັນມາດຕະຖານຈັດປະເທດຕ່າງໆອອກເປັນ 4 ກຸ່ມ**ຍ່ອຍ ຄື:

1) ກຸ່ມປະເທດທີ່ມີລາຍໄດ້ຕ່ຳ
2) ກຸ່ມປະເທດທີ່ມີລາຍໄດ້ປານກາງ
3) ກຸ່ມປະເທດທີ່ມີລາຍໄດ້ສູງກວ່າປານກາງ
4) ກຸ່ມປະເທດທີ່ມີລາຍໄດ້ສູງ.

ການຈັດບັນດາປະເທດອອກເປັນກຸ່ມໃຫຍ່ ແລະ ກຸ່ມຍ່ອຍ ຄືແນວນັ້ນ ນອກຈາກໄດ້ອີງໃສ່ມາດຕະຖານສະເພາະແລ້ວ ເພິ່ນຍັງອີງໃສ່**ບັນຫາກວມລວມຈຳນວນໜຶ່ງທີ່ຄ້າຍຄືກັນ** ຊຶ່ງມີຢູ່ໃນແຕ່ລະປະເທດພວມພັດທະນາ. ບັນຫາກວມລວມທີ່ຄ້າຍຄືກັນນັ້ນ ຖືເປັນ**ບັນຫາທ້າທາຍໃຫຍ່**ບົນເສັ້ນທາງການພັດທະນາ. ບັນຫາກວມລວມຄ້າຍຄືກັນທີ່ມີລັກສະນະທ້າທາຍທີ່ວ່ານັ້ນລວມມີ: ບັນຫາຄວາມທຸກຍາກຂອງປະຊາຊົນ; ບັນຫາການໄດ້ຮັບການສຶກສາຂັ້ນພື້ນຖານບໍ່ທົ່ວເຖິງ ຫລື ໄດ້ຮັບການສຶກສາທີ່ຂາດຄຸນນະພາບ, ບັນຫາການໄດ້ຮັບການບໍລິການດ້ານສາທາລະນະສຸກບໍ່ທົ່ວໜ້າ ແລະ ມີອາຫານການກິນບໍ່ພຽງພໍ ແລະ ຂາດທາດບຳລຸງ; ບັນຫາການຂາດວຽກເຮັດງານທຳ ແລະ ການຫວ່າງງານຕາມລະດູການ; ບັນຫາຄວາມອ່ອນນ້ອຍຂອງພື້ນຖານເສດຖະກິດແຫ່ງຊາດ ແລະ ການເງິນຂອງປະເທດທີ່ຕ້ອງໄດ້ເພິ່ງພາການຊ່ວຍເຫລືອຈາກພາຍນອກ; ບັນຫາການຄຸ້ມຄອງແຫລ່ງ

ຊັບພະຍາກອນ ແລະ ການນຳໃຊ້ທີ່ຍັງດ້ອຍປະສິດທິພາບ ທີ່ກໍ່ໃຫ້ເກີດຜົນກະທົບໃນຫລາຍດ້ານ, ບັນຫາຄວາມເລື່ອມລໍ້າ ແລະ ຄວາມບໍ່ສະເໝີພາບທາງສັງຄົມ ແລະ ບັນຫາອື່ນໆອີກ...

ສຳລັບປະເທດເຮົາ ຊຶ່ງໄດ້ຖືກຈັດໃຫ້ຢູ່ໃນກຸ່ມບັນດາປະເທດດ້ອຍພັດທະນາ ກໍມີບັນຫາທີ່ຄ້າຍຄືກັນ ແລະ ຕ່າງກັນກັບບັນຫາກວມລວມເຫລົ່ານັ້ນ, ຊຶ່ງສາມາດແຍກເປັນ 4 ບັນຫາໃຫຍ່ທີ່ສະທ້ອນເຖິງສະພາວະຄວາມເປັນຈິງ ດັ່ງນີ້:

**ບັນຫາໃຫຍ່ອັນທີ 1:** ຈຳນວນຄອບຄົວທຸກຍາກຍັງມີອັດຕາສ່ວນກວມ 16 % ຂອງຈຳນວນຄອບຄົວທົ່ວປະເທດ (ປີ 2012), ຊຶ່ງສະແດງໃຫ້ເຫັນວ່າມີບັນຫາຫລາຍຢ່າງທີ່ຕ້ອງມີການວິໄຈໄຈ້ແຍກຊອກຫາສາເຫດຂອງມັນ ເພື່ອກຳນົດວິທີການແກ້ໄຂ ໃຫ້ສອດຄ່ອງ ເຊັ່ນ:

- ຄວາມທຸກຍາກອັນເນື່ອງມາຈາກການມີລາຍໄດ້ຕໍ່າ ກໍຕ້ອງໄຈ້ແຍກຕື່ມວ່າ ການມີລາຍໄດ້ຕໍ່າຂອງປະຊາຊົນເຮົານັ້ນ ມີສາເຫດມາຈາກອັນໃດ; ຈາກນັ້ນ ຈຶ່ງເຫັນໄດ້ວ່າການມີລາຍໄດ້ຕໍ່ານັ້ນແມ່ນເນື່ອງມາຈາກການຜະລິດຍັງມີສະມັດຖະພາບຕໍ່າ ແລະ ການເຮັດວຽກຜະລິດບໍ່ເຕັມປ່ຽມ ມີການຫວ່າງວຽກຕາມລະດູການຫລາຍ.
- ອັດຕາສ່ວນການຕາຍຂອງເດັກເກີດໃໝ່ທີ່ມີອາຍຸຕໍ່າກວ່າ 1 ປີ ແລະ 5 ປີຍັງສູງ ຊຶ່ງເປັນປັດໄຈເຮັດໃຫ້ອາຍຸຍືນສະເລ່ຍຂອງປະຊາກອນຍັງຢູ່ໃນເກນຕໍ່າຄື 68,3 ປີ (ໃນປີ 2010); ຊຶ່ງສະແດງໃຫ້ເຫັນວ່າປະຊາຊົນລາວເຮົາຍັງມີບັນຫາດ້ານສຸຂະພາບ ຍ້ອນການຢູ່ກິນຍັງຂາດສຸຂະອະນາໄມ ແລະ ຂາດໂພສະນາການທີ່ດີ;ສ່ວນໃນດ້ານໜຶ່ງອີກ ກໍແມ່ນຍ້ອນການບໍລິການດ້ານສາທາລະນະສຸກຍັງບໍ່ທັນ

ໄດ້ຄຸນນະພາບ ແລະ ບໍ່ທົ່ວເຖິງ.

- ປະຊາຊົນສ່ວນຫລວງຫລາຍມີລະດັບການສຶກສາຕໍ່າ ແລະ ມີຈໍານວນບໍ່ໜ້ອຍທີ່ບໍ່ໄດ້ຮັບການສຶກສາ (ມີແຕ່ຮຽນລົບລ້າງຄວາມບໍ່ຮູ້ໜັງສື), ລະບົບການສຶກສາແຫ່ງຊາດຍັງມີບັນຫາດ້ານຄຸນນະພາບທີ່ຕິດພັນກັບການຮຽນ ແລະ ການສອນ; ເງື່ອນໄຂ ແລະ ໂອກາດສໍາລັບການຮຽນຮູ້ໃນດ້ານຕ່າງໆຂອງພົນລະເມືອງຍັງຈໍາກັດ, ທັດສະນະຄະຕິ ແລະ ຈຸດປະສົງດ້ານການຮຽນຂອງຄົນຈໍານວນບໍ່ໜ້ອຍຍັງບໍ່ທັນຖືກຕ້ອງ. ອັນນີ້ ກໍແມ່ນສິ່ງບົ່ງບອກອັນສໍາຄັນຂອງຄວາມທຸກຍາກ, ຊຶ່ງເອີ້ນວ່າ "**ທຸກວິຊາຄວາມຮູ້**".

**ບັນຫາໃຫຍ່ອັນທີ 2:** ເສດຖະກິດແຫ່ງຊາດຍັງຂຶ້ນກັບການກະສິກໍາ ແລະ ການສົ່ງອອກແຮ່ທາດ ແລະ ວັດຖຸດິບຈາກທໍາມະຊາດ, ການປຸງແຕ່ງສ້າງມູນຄ່າເພີ່ມຍັງມີໜ້ອຍ; ຜູ້ປະກອບການຜະລິດ-ທຸລະກິດຢູ່ພາຍໃນບໍ່ທັນເຂັ້ມແຂງ ຊຶ່ງເປັນສາເຫດເຮັດໃຫ້ຄວາມສາ ມາດແຂ່ງຂັນບໍ່ສູງ.

ສິ່ງສະແດງອອກອັນເປັນຮູບປະທໍາ ແມ່ນການຜະລິດເປັນສິນຄ້າ ແລະ ການບໍລິການສ້າງລາຍໄດ້ ຍັງຢູ່ໃນຂັ້ນຕົ້ນຂອງການຂະຫຍາຍຕົວ ແລະ ເຕີບໃຫຍ່ຕາມເງື່ອນໄຂ ແລະ ຄວາມສາມາດຂອງອັດຕະພາບເປັນຕົ້ນຕໍ, ສ່ວນການສົ່ງເສີມອັນຈໍາເປັນຍັງບໍ່ທັນເປັນລະບົບທີ່ຮັດກຸມ ເປັນຕົ້ນແມ່ນ ດ້ານນະໂຍບາຍ ດ້ານທຶນຮອນ ແລະ ວິທະຍາການ; ຍ້ອນແນວນັ້ນການຜະລິດເປັນສິນຄ້າ ຈຶ່ງມີລັກສະນະເອກະເທດ ແລະ ເປັນໄປໂດຍມັນເອງຫລາຍກວ່າ.

**ບັນຫາໃຫຍ່ອັນທີ 3:** ການເງິນແຫ່ງຊາດຍັງອ່ອນນ້ອຍ ແລະ

ຂາດການສະສົມໃນລະດັບອັນຈຳເປັນ; ຄວາມສາມາດດ້ານການລົງທຶນຈາກພາຍໃນ ເພື່ອການພັດທະນາຍັງຈຳກັດ, ຊຶ່ງຈຳເປັນຕ້ອງໄດ້ເພິ່ງພາການຊ່ວຍເຫລືອກູ້ຢືມຈາກພາຍນອກ ແລະ ການລົງທຶນຂອງຕ່າງປະເທດເປັນປັດໄຈສຳຄັນ ເພື່ອດຸ່ນດ່ຽງ ແລະ ຊ່ວຍຊູຍູ້ໝູນການເຕີບໂຕ ແລະ ການພັດທະນາ.

**ບັນຫາໃຫຍ່ອັນທີ 4: ກົນໄກ ແລະ ລະບຽບການບໍລິຫານລັດ, ກໍຄື ລະບົບຄຸ້ມຄອງຂອງລັດຕໍ່ເສດຖະກິດ** ຍັງບໍ່ທັນ**ກົມກຽວກັບກົນໄກ**ຕະຫລາດຕາມທິດສັງຄົມນິຍົມ; **ບັນດາສະຖາບັນທີ່ປະຕິບັດພາລະບົດບາດ**ໃນດ້ານນີ້ ຍັງບໍ່ທັນເຂັ້ມແຂງ ແລະ ຍັງປະຕິບັດລະບອບການປະສານງານແບບລວມສູນເປັນເອກະພາບບໍ່ທັນສັກສິດ; ສ່ວນການຄຸ້ມຄອງ-ການຈັດສັນ ແລະ ນຳໃຊ້ແຫລ່ງຊັບພະຍາກອນຍັງມີບັນຫາດ້ານຄວາມເຂັ້ມງວດ ແລະ ມີດ້ານທີ່ກໍ່ໃຫ້ເກີດຄວາມສ່ຽງຕໍ່ຄວາມຍືນຍົງ.

ຕໍ່ໄປນີ້ແມ່ນການໄຈ້ແຍກແຕ່ລະບັນຫາ ເພື່ອເປັນການແລກປ່ຽນທັດສະນະຄວາມຮັບຮູ້ນຳກັນ:

**<u>ບັນຫາໃຫຍ່ອັນທີໜຶ່ງ</u>: ຄວາມທຸກຍາກຂອງປະຊາຊົນ.**

ເນື່ອງຈາກວ່າຄົນທຸກຍາກ ແລະ ຄອບຄົວທຸກຍາກມີຢູ່ເກືອບທຸກໆປະເທດຂອງໂລກ; ຈາກນັ້ນ ຈຶ່ງມີການເລັ່ງທວງໃຫ້ກຳນົດ**ມາດຕະຖານຕີລາຄາ**ຄວາມທຸກຍາກຂອງປະຊາຊົນໃນປະເທດໃດໜຶ່ງ ແລະ ໃນຂອບ ເຂດທົ່ວໂລກ ດ້ວຍການນຳໃຊ້ສູດອັນເປັນທີ່ຍອມຮັບ ດັ່ງນີ້ :

ພວກໜຶ່ງໄດ້ຄົ້ນຄວ້ານຳສະເໜີໃຫ້ເອົາ**ລະດັບຕ່ຳສຸດ ຂອງລາຍໄດ້**ທີ່ຈຳເປັນສຳລັບຊື້ອາຫານການກິນ, ເຄື່ອງນຸ່ງຫົ່ມ ແລະ ເຄື່ອງໃຊ້

ສອຍພາຍໃນຄອບຄົວ, ລວມທັງການໃຊ້ຈ່າຍຄ່າທີ່ພັກພາອາໄສ, ຊື້ຢາປົວພະຍາດ ແລະ ການເສຍຄ່າຮັກສາສຸຂະພາບ... ຫລື ເວົ້າລວມແມ່ນ ສະເໜີໃຫ້ເອົາ**ລາຍໄດ້ຕ່ຳສຸດສຳລັບການຄອງຊີບຂອງຄົນຜູ້ໜຶ່ງເປັນມາດຕະຖານຕີລາຄາ.** ແຕ່ຄຳສະເໜີນີ້ໄດ້ຖືກປະຕິເສດຍ້ອນວ່າ**ບໍ່ສາມາດກຳນົດລະດັບຕ່ຳສຸດໂດຍລວມໄດ້ສຳລັບທົ່ວໂລກ**

- ເມື່ອເປັນແນວນັ້ນ ຈຶ່ງມີນັກຄົ້ນຄວ້າອີກພວກໜຶ່ງສະເໜີໃຫ້ຮັບຮອງເອົາ " ຂີດໝາຍ (ຫລື ລະດັບ) ຄວາມທຸກຍາກລະຫວ່າງປະເທດ" ຊຶ່ງຖືເອົາ**ລະດັບລາຍໄດ້ເປັນຈຳນວນເງິນ 370 ໂດລາສະຫະລັດ ຕໍ່ຄົນຕໍ່ປີ** ເປັນ**ມາດຕະຖານກຳນົດຄວາມສາມາດຊື້** (ຕາມລາຄາໃນປີ 1985) ແລະ ສະເໜີໃຫ້ຮັບຮອງເອົາເງິນໂດລາສະຫະລັດເປັນສະກຸນເງິນ ເພື່ອແລກປ່ຽນກັບເງິນຂອງປະເທດນັ້ນໆ.

ປະກົດວ່າຂໍ້ສະເໜີນີ້ ໄດ້ຖືກຍອມຮັບໃນຫລັກການ, ເພາະວ່າໃນປີ 1989 **ກອງທຶນປະຊາກອນຂອງອົງການສະຫະປະຊາຊາດ** ໄດ້ນຳໃຊ້ສູດນີ້ ເປັນມາດຕະຖານຕີລາຄາຄວາມທຸກຍາກໃນທົ່ວໂລກ ຊຶ່ງພົບວ່າເກືອບ 23 % ຫລື ປະມານ 1250 ລ້ານຄົນຂອງປະຊາກອນໂລກຍັງເປັນຄົນທຸກຍາກ, ຊຶ່ງໃນນັ້ນ ຢູ່ທະວີບອາຊີຂອງພວກເຮົາມີຄົນທຸກຍາກຫລາຍເຖິງ 675 ລ້ານຄົນ.

- ເຖິງວ່າກອງທຶນປະຊາກອນໂລກ ໄດ້ໃຊ້ສູດນີ້ເປັນມາດຕະຖານຕີລາຄາກໍຕາມ, ແຕ່ກໍມີຫລາຍປະເທດຮັບເອົານຳບໍ່ໄດ້. ເຫດຜົນທີ່ຫລາຍປະເທດຮັບເອົານຳບໍ່ໄດ້ນັ້ນແມ່ນຢູ່ບ່ອນວ່າການເອົາເງິນ 370 ໂດລາຕໍ່ຄົນຕໍ່ປີ (ຫລື ມື້ໜຶ່ງ-1 ໂດລາຕໍ່ຄົນ) ເປັນມາດຕະຖານນັ້ນມັນບໍ່ແທດກັບສະພາບຄວາມເປັນຈິງດ້ານການຄອງຊີບຂອງຄົນ

ຢູ່ແຕ່ລະປະເທດ; ເພາະວ່າລາຄາເຂົ້າ, ຊີ້ນ ປາ ອາຫານ, ເຄື່ອງນຸ່ງ ຫົ່ມ, ເຄື່ອງໃຊ້ສອຍໃນຄົວເຮືອນ ແລະ ລາຄາທີ່ພັກພາອາໄສຢູ່ແຕ່ ລະປະເທດລ້ວນແຕ່ຕ່າງກັນ. ຖ້າຫາກລາຄາຕ່າງກັນ, ຄວາມສາມາດ ຊື້ກໍຕ່າງກັນ ຫລື ໃຊ້ຈ່າຍໜຶ່ງໂດລາທໍ່ກັນ ແຕ່ອາດຈະໄດ້ ຊີ້ນ ປາ ອາຫານ ຫລາຍໜ້ອຍຕ່າງກັນ. ເມື່ອເປັນເຊັ່ນນັ້ນ ຫລາຍປະເທດ (ເຖິງວ່າຍອມຮັບເປັນຫລັກການ) ຈິ່ງໄດ້ຫລຸດມາດຕະຖານນັ້ນລົງໃຫ້ ແທດເໝາະກັບລະດັບການຄອງຊີບ ຫລື ລາຄາຢູ່ປະເທດຕົນ.

- ອັນນັ້ນສະແດງໃຫ້ເຫັນວ່າ ການກຳນົດ**ມາດຕະຖານຕີລາຄາຄວາມທຸກຍາກ** ແມ່ນບັນຫາໃຫຍ່ທີ່ມີລັກສະນະກວມລວມ, ຊຶ່ງຢູ່ ປະເທດພວກເຮົາ ກໍໄດ້ມີການຄົ້ນຄວ້າກຳນົດມາດຕະຖານສະເພາະ ຂອງຕົນ ເພື່ອໃຫ້ແທດເໝາະກັບລະດັບຄ່າຄອງຊີບ ແລະ ຈຸດພິເສດ ດ້ານການຢູ່ກິນຂອງຄົນລາວເຜົ່າຕ່າງໆ.

ຢູ່ປະເທດລາວເຮົາ ໄດ້ກຳນົດມາດຕະຖານຄວາມທຸກຍາກສຳ ລັບຄອບຄົວໄວ້ ດັ່ງນີ້: ຄອບຄົວທີ່ຈັດວ່າທຸກຍາກແມ່ນຄອບຄົວທີ່ມີ ລາຍຮັບສະເລ່ຍ ຄິດໄລ່ເປັນເງິນກີບຕ່ຳກວ່າມາດຕະຖານ ດັ່ງນີ້:

- ສະເລ່ຍທົ່ວປະເທດແມ່ນ: 192,000 ກີບ / ຄົນ / ເດືອນ
- ສຳລັບເຂດຊົນນະບົດແມ່ນ: 180,000 ກີບ / ຄົນ / ເດືອນ
- ສຳລັບເຂດຕົວເມືອງແມ່ນ: 240,000 ກີບ / ຄົນ / ເດືອນ

✳ ການກຳນົດມາດຕະຖານຕີລາຄາຄວາມທຸກຍາກ ແມ່ນມີ ຄວາມສຳຄັນແທ້; ແຕ່ອັນສຳຄັນກວ່ານັ້ນອີກ ແມ່ນການຄົ້ນຄວ້າກຳ ແໜ້ນຄວາມຈິງທີ່ວ່າ **ມີອັນໃດແດ່ທີ່ເປັນສາເຫດ**ເຮັດໃຫ້ຄົນ ແລະ ຄອບ ຄົວຈຳນວນບໍ່ໜ້ອຍຢູ່ປະເທດເຮົາຕົກຢູ່ໃນສະພາບທຸກຍາກ ?

ຫລັກມູນທິດສະດີທາງເສດຖະສາດໄດ້ໃຫ້ການຢືນຢັນວ່າ: ສາເຫດຕົ້ນຕໍຂອງຄວາມທຸກຍາກແມ່ນຍ້ອນ**ສະມັດຖະພາບການຜະລິດຕໍ່າ ຫລື ຍ້ອນການທຳມາຫາກິນ (ເຮັດໄຮ່-ເຮັດນາ) ໄດ້ຮັບຜົນຕອບແທນໜ້ອຍບໍ່ກຸ້ມກິນພາຍໃນຄອບຄົວ, ບໍ່ມີສ່ວນເຫລືອຂາຍພໍມີລາຍໄດ້ໄປຊື້ເຄື່ອງກິນຂອງໃຊ້ອັນຈຳເປັນພື້ນຖານ;** ຈາກນັ້ນຄອບຄົວຈຶ່ງຢູ່ໃນສະພາບທີ່ທຸກຍາກຂາດເຂີນ.

- **ສະມັດຖະພາບການຜະລິດ** ໝາຍເຖິງຄວາມສາມາດຂອງຊາວນາ ຫລື ຂອງກຳມະກອນ (ຜູ້ອອກແຮງງານເວົ້າລວມ) ຜູ້ໜຶ່ງໃນການສ້າງຜົນຜະລິດອອກມາໃນຫົວໜ່ວຍເວລາໃດໜຶ່ງ (ຊົ່ວໂມງ, ອາທິດ, ເດືອນ, ປີ). **ຕົວຢ່າງ**: ຊາວນາຄອບຄົວໜຶ່ງມີແຮງງານທັງໝົດ 5 ຄົນ, ເຮັດນາໝົດປີ ໄດ້ເຂົ້າເປືອກ 2000 ກິໂລ ( 2 ໂຕນ ); ໃນກໍລະນີນີ້ ຖ້າໄລ່ສະເລ່ຍແມ່ນປີໜຶ່ງ ຜູ້ໜຶ່ງສາມາດຜະລິດໄດ້ແຕ່ 400 ກິໂລ. ອັນນີ້ໝາຍຄວາມວ່າ ເຂົ້າ 400 ກິໂລ ແມ່ນຕົວບົ່ງຊີ້**ສະມັດຖະພາບການຜະລິດຂອງຊາວນາຜູ້ໜຶ່ງໃນປີໜຶ່ງ.**

- **ສະມັດຖະພາບການຜະລິດ**ນີ້ແມ່ນມາດຕະຖານການຕີລາຄາອັນສຳຄັນທີ່ສຸດຕໍ່ຄວາມສາມາດ ກໍຄື ປະສິດທິຜົນຂອງການອອກແຮງງານ. ສະມັດຖະພາບການຜະລິດຕໍ່າ ຫລື ສູງ ມັນບົ່ງບອກໃຫ້ຮູ້ໄດ້ໂລດວ່າຜູ້ອອກແຮງງານຜູ້ນັ້ນມີຄວາມສາມາດ, ມີຄວາມອົດທົນສູ້ຊົນ ແລະ ມີສີມືຄືແນວໃດ; ຫລື ວ່າວິສາຫະກິດນັ້ນມີໂຄງສ້າງ-ມີການຈັດຕັ້ງການຜະລິດ ແລະ ການບໍລິຫານຄຸ້ມຄອງຄືແນວໃດ ?

- ຊາວນາທີ່ເຮັດການຜະລິດມີສະມັດຖະພາບສູງກວ່າຜູ້ອື່ນ ຈະ**ໄດ້ຮັບຜົນຜະລິດຫລາຍກວ່າ** ແລະ ຖ້າຫາກຂາຍໃນລາຄາດຽວກັນ

ກັບຜູ້ອື່ນ ກໍຈະໄດ້ເງິນຫລາຍກວ່າ. ອັນນີ້ ເອີ້ນວ່າຊາວນາເຮັດການຜະລິດມີປະສິດທິຜົນ. ສ່ວນປະສິດທິຜົນທີ່ເກີດຂຶ້ນ ກໍແມ່ນຍ້ອນສະມັດຖະພາບການຜະລິດເປັນປັດໄຈຕັດສິນ. ຖ້າຫາກເວົ້າແບບປຽບທຽບລະຫວ່າງຄອບຄົວຊາວນາດ້ວຍກັນ ກໍຈະເຫັນແຈ້ງວ່າຜູ້ທີ່ມີສະມັດຖະພາບການຜະລິດສູງກວ່າ ຈະເປັນຜູ້ໄດ້ຮັບຜົນຕອບແທນຫລາຍກວ່າ.

- ຍ້ອນສະມັດການຜະລິດສູງນີ້ເອງ, ບັນດາປະເທດທີ່ພັດທະນາແລ້ວ ຈຶ່ງສາມາດຜະລິດພືດຜົນກະສິກໍາໄດ້ຢ່າງຫລວງຫລາຍຕອບສະໜອງຄວາມຕ້ອງການພາຍໃນ ແລະ ສົ່ງອອກໄປຂາຍຕ່າງປະເທດ, ທັງໆທີ່ຊາວກະສິກອນຢູ່ປະເທດເຫລົ່ານັ້ນມີຈໍານວນບໍ່ຫລາຍ. ຖ້າຫາກທຽບສະມັດຖະພາບການຜະລິດ ລະຫວ່າງປະເທດທີ່ພັດທະນາແລ້ວກັບປະເທດພວມພັດທະນາ ຈະເຫັນວ່າມີການຫລຸດໂຕນກັນຫລາຍ, ທັງນີ້ ກໍຍ້ອນວ່າຢູ່ປະເທດທີ່ພັດທະນາແລ້ວສະມັດຖະພາບການຜະລິດແມ່ນນັບມື້ນັບສູງຂຶ້ນ, ແຕ່ວ່າຢູ່ປະເທດພວມພັດທະນາສະມັດຖະພາບການຜະລິດຊໍ້າພັດເພີ່ມຂຶ້ນຊ້າ. ຍ້ອນແນວນັ້ນສະມັດຖະພາບການຜະລິດຢູ່ປະເທດພວມພັດທະນາ (ລວມທັງຢູ່ປະເທດເຮົາ) ຈຶ່ງຕໍ່າກວ່າຢູ່ປະເທດທີ່ພັດທະນາແລ້ວຫລາຍເທົ່າ. ອັນນີ້ ແມ່ນສະພາບຄວາມເປັນຈິງ, ຊຶ່ງພວກເຮົາຄວນລົງເລິກຊອກຮູ້ວ່າຍ້ອນຫຍັງສະມັດຖະພາບການຜະລິດຢູ່ປະເທດພວມພັດທະນາ **ກໍຄື ຢູ່ປະເທດ**ເຮົາ ຈຶ່ງເພີ່ມຂຶ້ນຊ້າ ແລະ ມີລະດັບຕໍ່າກວ່າປະເທດທີ່ພັດທະນາແລ້ວ. ຂໍສະເໜີເພື່ອແລກປ່ຽນທັດສະນະກ່ຽວກັບ**ສາເຫດ**ຈໍານວນໜຶ່ງ ດັ່ງນີ້:

- **ສາເຫດອັນທີໜຶ່ງ**: ແມ່ນຍ້ອນກໍາມະກອນ ແລະ ຊາວກະສິ

ກອນ ຫລື ຊາວຜູ້ອອກແຮງງານລາວເຮົາເວົ້າລວມ ສ່ວນໃຫຍ່ແມ່ນບໍ່ໄດ້ຮັບການສຶກສາກໍ່ສ້າງທາງດ້ານວິຊາຊີບ; ຍິ່ງໄປກວ່ານັ້ນແມ່ນ**ຂາດຄວາມພ້ອມ**ໃນການຮຽນຮູ້ເອົາວິທະຍາສາດ-ວິທະຍາການໃໝ່ໆເຂົ້າຮັບໃຊ້ການທຳມາຫາກິນ ຂອງຕົນເອງໃຫ້ມີຜົນສຳເລັດຫລາຍຂຶ້ນ; **ຄວາມພ້ອມ**ທີ່ວ່ານັ້ນ ລວມມີຄວາມຮູ້ທົ່ວໄປ ແລະ ຄວາມຮູ້ດ້ານພາສາຕ່າງປະເທດ; ນອກຈາກນັ້ນ ກໍແມ່ນການມັກອ່ານ ມັກຮຽນ ກໍຄືຄວາມເປັນເຈົ້າການເຮັດວຽກດ້ວຍຄວາມອົດທົນສູ້ຊົນຍັງບໍ່ທັນກາຍເປັນມູນເຊື້ອ.

- **ສາເຫດອັນທີສອງ**: ແມ່ນຍ້ອນລະບຽບການ ແລະ ກົນໄກການຄຸ້ມຄອງເສດຖະກິດໃນບາງດ້ານ ຍັງກີດໜ່ວງຜູ້ປະກອບການຜະລິດທຸລະກິດ ແລະ ຜູ້ອອກແຮງງານໃນການຍົກສູງສະມັດຖະພາບການຜະລິດໃຫ້ສູງຂຶ້ນ ໂດຍສະເພາະແມ່ນ ກົນໄກດ້ານການເງິນ (ພາສີ-ອາກອນ), ກົນໄກດ້ານເງິນຕາ (ສິນເຊື່ອ ແລະ ດອກເບ້ຍທະນາຄານ); ນອກຈາກນັ້ນ ກໍແມ່ນລະບຽບການ ແລະ ຂັ້ນຕອນການກວດກາການຜະລິດ ກໍຄື ການຈໍລະຈອນສິນຄ້າທີ່ພາໃຫ້ມີການສິ້ນເປືອງເພີ່ມເຕີມຫລາຍ ແລະ ອື່ນໆອີກ.

- ເວົ້າສະເພາະຊາວກະສິກອນ ກໍມີດ້ານທີ່ຖືກກີດໜ່ວງດ້ວຍລະບຽບ-ລະບອບການຄຸ້ມຄອງການນຳໃຊ້ທີ່ດິນ ທີ່ບໍ່ທັນຮັດກຸມເຂັ້ມງວດ, ຊຶ່ງພາໃຫ້ການນຳໃຊ້ດິນບໍ່ຖືກກັບເປົ້າໝາຍ, ຂາດສິ່ງຈູງໃຈໃນການປັບປຸງທີ່ດິນໃຫ້ມີຄຸນນະພາບ ແລະ ມີສະມັດຖະພາບການຜະລິດສູງຂຶ້ນ. ອັນນີ້ ເປັນສາເຫດໜຶ່ງທີ່ພາໃຫ້ການນຳໃຊ້ດິນຍັງບໍ່ທັນມີປະສິດທິຜົນສູງ ແລະ ບໍ່ສາມາດເສີມຂະຫຍາຍທ່າແຮງຂອງດິນ ຊຶ່ງ

ເປັນພາຫະນະການຜະລິດພື້ນຖານ ແລະ ເປັນປັດໄຈສ້າງຜົນຜະລິດ -ສ້າງມູນຄ່າເພີ່ມອັນຕົ້ນຕໍ ໃນພື້ນຖານເສດຖະກິດແຫ່ງຊາດຂອງພວກເຮົາ.

• **ສາເຫດອັນທີສາມ:** ປະເທດເຮົາຍັງມີທຶນໜ້ອຍສຳລັບຊື້ເຄື່ອງຈັກເຄື່ອງລານ ກໍຄື ພາຫະນະ ວັດຖຸອຸປະກອນການຜະລິດອັນທັນສະໄໝ; ການຄົ້ນຄວ້າທາງດ້ານວິທະຍາສາດ ແລະ ວິທະຍາການທີ່ກ້າວໜ້າເຂົ້າຮັບໃຊ້ການຜະລິດ (ທັງຂອງຄອບຄົວປະຊາຊົນ ແລະ ຫົວໜ່ວຍການຜະລິດຂອງຜູ້ປະກອບການ) ຍັງມີໜ້ອຍ ຍ້ອນທຶນຮອນມີຈຳກັດ ແລະ ຍ້ອນຂາດກົນໄກ-ນະໂຍບາຍສົ່ງເສີມທີ່ເໝາະສົມ; ເບິ່ງຄືວ່າຈຳນວນນັກຄົ້ນຄວ້າ ແລະ ບັນດິດໄດ້ເພີ່ມຂຶ້ນຫລາຍ, ແຕ່ການສືບຕໍ່ເສີມຂະຫຍາຍ"ວຸດທິບັດ" ເພື່ອຕອບສະໜອງໃຫ້ແກ່ຄວາມຮຽກຮ້ອງຕ້ອງການຂອງການພັດທະນາພັດບໍ່ສົມຄູ່. ອັນນີ້ ເປັນສາເຫດເຮັດໃຫ້ປະເທດເຮົາຂາດນັກວິຊາການຜູ້ຊ່ຽວຊານສະເພາະດ້ານ ແລະ ນັກຄຸ້ມຄອງຜູ້ທີ່ມີຄວາມສາມາດ (ຜູ້ທີ່ເກັ່ງ), ເຮັດໃຫ້ຕຳແໜ່ງງານທີ່ດີຈຳນວນຫລວງຫລາຍ ທີ່ເກີດຈາກໂຄງການພັດທະນາ (ຂອງລັດ ແລະ ຂອງພາກເອກະຊົນ) ຖືກຍາດເອົາໄປຢ່າງງ່າຍດາຍໂດຍຊາວຕ່າງຊາດ.

• ລະບົບການຄຸ້ມຄອງ ແລະ ເງິນເດືອນຂອງລັດຖະກອນທີ່ເຮັດວຽກຕິດພັນກັບການຊຸກຍູ້ສົ່ງເສີມການຜະລິດຂອງປະຊາຊົນ ແລະ ຜູ້ປະກອບການຍັງບໍ່ທັນເປັນປັດໄຈຊຸກຍູ້ຄວາມຫ້າວຫັນ ແລະ ຄວາມເປັນເຈົ້າການໃນການປະຕິບັດໜ້າທີ່, ພະນັກງານທີ່ລົງຮາກຖານຍັງບໍ່ທັນແມ່ນນັກວິຊາການສະເພາະດ້ານທີ່ສາມາດໃຫ້ຄຳແນະນຳ ແລະ

ຊ່ວຍປະຊາຊົນໃນການປັບປຸງປ່ຽນແປງແບບວິທີການຜະລິດ ກໍຄື ການຍົກສູງສະມັດຖະພາບການຜະລິດ.

- ນອກຈາກສາເຫດ 3 ຢ່າງດັ່ງກ່າວນັ້ນ, **ການມີວຽກເຮັດບໍ່ປົກກະຕິ** ແລະ **ການຫວ່າງງານຕາມລະດູການ**, ກໍຍັງເປັນສາເຫດໜຶ່ງທີ່ພາໃຫ້ປະຊາຊົນຈຳນວນບໍ່ໜ້ອຍຍັງທຸກຍາກຂາດເຂີນ ແລະ ມີລະດັບຊີວິດການເປັນຢູ່ຕໍ່າ ຍ້ອນມີລາຍໄດ້ໜ້ອຍບໍ່ພຽງພໍສໍາລັບການຕອບສະໜອງຄວາມຕ້ອງການອັນພື້ນຖານ. ຄວາມຈິງມີຢູ່ວ່າ ຊາວນາ-ຊາວສວນ ( ຫລື ຊາວກະສິກອນ ) ກໍຄື ຊາວຜູ້ອອກແຮງງານລາວເຮົາຍັງໃຊ້ເວລາອອກແຮງງານໃນມື້ໜຶ່ງບໍ່ເຕັມ 8 ຊົ່ວໂມງ, ທັງນີ້ ກໍຍ້ອນວ່າເຂົາເຈົ້າເປັນຜູ້ອອກແຮງງານ "ອິດສະລະ" (ບໍ່ມີຜູ້ຄຸມງານ) ສະນັ້ນ ຈຶ່ງບໍ່ເຂັ້ມງວດຕໍ່ເວລາ, ຢາກເຮັດກໍເຮັດ, ຢາກເຊົາກໍເຊົາ; ຊຶ່ງຖ້າຫາກໄລ່ເປັນອາທິດ ຫລື ເປັນເດືອນ-ເປັນປີ ເວລາເຮັດວຽກບໍ່ເຕັມຊົ່ວໂມງກໍຍິ່ງຫລາຍ, ເພາະວ່ານອກຈາກຈະພັກວັນເສົາ-ວັນທິດແລ້ວເພິ່ນຍັງພັກເອງໃນມື້ວັນສິນ, ວັນບຸນ, ວັນດອງ, ວັນເກີດ... ແມ່ນຢູ່ວ່າຊາວກະສິກອນຢູ່ປະເທດເຮົາເປັນຄົນດຸໝັ່ນ "ໄປຢຽບໝາ-ມາຢຽບຊຽດ" ແຕ່ເພິ່ນກໍເຮັດແບບ "ຄ່ອຍຫລິ້ນ-ຄ່ອຍກິນ" ເປັນສ່ວນໃຫຍ່, ຫາກບໍ່ໄດ້ຄໍານຶງເຖິງຊົ່ວໂມງການ-ຊົ່ວໂມງງານພໍປານໃດ. ດັ່ງນັ້ນ ເພິ່ນຈຶ່ງບໍ່ໄດ້ໃຊ້ເວລາເຂົ້າໃນການຜະລິດຢ່າງເຕັມປ່ຽມ ຫລື ບໍ່ໄດ້ອອກແຮງງານຜະລິດຢ່າງເຕັມເວລາ ແລະ ເຕັມຄວາມສາມາດຂອງຕົນ.

ການເຮັດວຽກບໍ່ເຕັມປ່ຽມ ຍ້ອນສາເຫດດັ່ງກ່າວນັ້ນ ຍ່ອມສົ່ງຜົນເຮັດໃຫ້ການຜະລິດໄດ້ຜົນບໍ່ເຕັມສ່ວນ, ເມື່ອບວກຕື່ມກັບລະດັບວິຊາຊີບ ແລະ ສີມືແຮງງານທີ່ຍັງຕໍ່າ ມັນຍິ່ງເຮັດໃຫ້ສະມັດຖະພາບການ

ຜະລິດຕ່ຳລົງ. ຖ້າຫາກວ່າໃນທົ່ວປະເທດມີຜູ້ອອກແຮງງານຫລາຍຄົນເປັນຄືແນວນັ້ນ, ເປັນອັນແນ່ນອນວ່າ ຜົນຜະລິດລວມທີ່ອອກມາກໍຈະໄດ້ບໍ່ເຕັມສ່ວນ; ຊຶ່ງສາມາດເຮັດໃຫ້ການເພີ່ມຂຶ້ນຂອງລວມຍອດຜະລິດຕະພັນພາຍໃນບໍ່ໄດ້ຕາມຄາດໝາຍ. ອັນນີ້ຍັງເປັນບັນຫາໃຫຍ່ສຳລັບປະເທດເຮົາ ກໍຄື ປະເທດພວມພັດທະນາອື່ນໆ, ທັງນີ້ ກໍຍ້ອນວ່າລວມຍອດຜະລິດຕະພັນພາຍໃນສ່ວນໜຶ່ງທີ່ສຳຄັນ ແມ່ນຖືກສ້າງຂຶ້ນຢູ່ໃນຂົງເຂດກະສິກຳ ຊຶ່ງແມ່ນຊາວກະສິກອນເປັນຜູ້ຜະລິດຕົ້ນຕໍ.

ສຳລັບຢູ່ໂຮງຈັກໂຮງງານ ຫລື ສະຖານທີ່ກໍ່ສ້າງ ຜູ້ອອກແຮງງານທີ່ຂາດຄວາມຕັ້ງໃຈ, ຂາດຄວາມອົດທົນສູ້ຊົນ ແລະ ທັງຂາດລະບຽບວິໄນໃນການເຮັດວຽກກໍຍັງມີຫລາຍ, ຊຶ່ງເປັນສາເຫດເຮັດໃຫ້ສະມັດຖະພາບຂອງງານຕ່ຳເຖິງຂັ້ນວ່າເອົາຜູ້ນັ້ນອອກຈາກວຽກ ຫລື ຜູ້ນັ້ນບໍ່ມາເຮັດວຽກ (ໄປຫລິ້ນບຸນຢູ່ບ້ານ), ມັນກໍບໍ່ມີຜົນກະທົບຫຍັງຕໍ່ການຜະລິດໂດຍລວມ. ຖ້າຫາກວ່າຜູ້ອອກແຮງງານສ່ວນຫລວງຫລາຍຢູ່ປະເທດເຮົາເປັນຄືແນວນັ້ນ, ນອກຈາກຈະເຮັດໃຫ້ຜູ້ປະກອບການ-ຜູ້ຈ້າງງານເຈັບຫົວ; ມັນຍັງອາດເຮັດໃຫ້ອັດຕາການເຕີບໂຕຂອງເສດຖະກິດແຫ່ງຊາດສະງັກຊັກຊ້າລົງໄດ້ ຫລື ຍິ່ງໄປກວ່ານັ້ນ ອາດຈະເຮັດ ໃຫ້ການພັດທະນາບໍ່ບັນລຸຜົນຕາມຄາດໝາຍ.

- ສາເຫດສຳຄັນອັນໜຶ່ງທີ່ພາໃຫ້ສະມັດຖະພາບການຜະລິດຢູ່ປະເທດເຮົາຕ່ຳ ນັ້ນແມ່ນ**ຍ້ອນຄົນທີ່ມີຄວາມຮູ້ຄວາມສາມາດຈຳນວນບໍ່ໜ້ອຍຍັງບໍ່ມີໂອກາດ ແລະ ບໍ່ມີເງື່ອນໄຂໄດ້ເຂົ້າເຮັດວຽກ** ຫລື ເຮັດວຽກບໍ່ເຕັມເມັດເຕັມໜ່ວຍ; ເມື່ອເປັນຄືແນວນັ້ນ ວິຊາຄວາມຮູ້ທີ່ໄດ້ຮຽນມາ ແລະ ເຫື່ອແຮງ ກໍບໍ່ໄດ້ຖືກອຸທິດໃຫ້ແກ່ການສ້າງຜົນຜະລິດ,

ສ້າງມູນຄ່າເພີ່ມໃຫມ່ເຂົ້າໃນເສດຖະກິດແຫ່ງຊາດ. ເປັນຫຍັງຄົນທີ່ໄດ້ຮັບການສຶກສາ, ມີວິຊາຄວາມຮູ້ ຈຶ່ງບໍ່ໄດ້ເຂົ້າເຮັດວຽກ ຫລື ເຮັດວຽກບໍ່ເຕັມເມັດເຕັມໜ່ວຍ.

ກ່ອນອື່ນແມ່ນຍ້ອນບ່ອນເຮັດວຽກ ແລະ ຕໍາແໜ່ງງານທີ່ເໝາະສໍາລັບເຂົາເຈົ້າມີຈໍາກັດ, ການຮັບເອົາຄົນທີ່ມີລະດັບເຂົ້າເຮັດວຽກໃນແຕ່ລະປີໜ້ອຍ, ແຕ່ຜູ້ສະໝັກພັດມີຫລາຍ. ສະນັ້ນ ຈຶ່ງມີການແຂ່ງຂັນສູງ; ມີແຕ່ຜູ້ເກັ່ງກວ່າທໍ່ນັ້ນ ຈຶ່ງໄດ້ຖືກເລືອກເຂົ້າເຮັດວຽກ.

ແຕ່ກໍມີສາເຫດອື່ນອີກທີ່ພາໃຫ້ຜູ້ມີວິຊາຄວາມຮູ້ ແລະ ຜູ້ເກັ່ງກວ່າບໍ່ມີໂອກາດ ແລະ ບໍ່ມີເງື່ອນໄຂເຂົ້າເຮັດວຽກ; ນັ້ນແມ່ນການເລືອກ-ການຮັບເອົາຄົນເຂົ້າເຮັດວຽກ ຍັງບໍ່ທັນໂປ່ງໃສ ຍ້ອນອັນທີ່ເອີ້ນວ່າລະບົບ "ເສັ້ນສາຍ" ຫລື ມີການ "ຈ້າງເຂົ້າເຮັດການ". ໃນເມື່ອພວກທີ່ມີ "ເສັ້ນສາຍ" ແລະ ບໍ່ເກັ່ງແທ້, ທັງບໍ່ມີຄວາມຕັ້ງໃຈຈິງທີ່ຈະເຮັດວຽກ (ມີແຕ່ຢາກເຂົ້າການ ແຕ່ບໍ່ຢາກເຮັດວຽກ) ເຂົ້າໄປຫລາຍ, ມັນກໍບໍ່ຊ່ວຍໃຫ້ສະມັດຖະພາບຂອງງານເພີ່ມຂຶ້ນ ແລະ ການຜະລິດກໍບໍ່ມີປະສິດທິພາບສູງພໍທໍ່ໃດ, ທັງນີ້ ກໍຍ້ອນວ່າຄົນພວກນັ້ນບໍ່ໄດ້ເຮັດວຽກຢ່າງເຕັມປ່ຽມ.

**ສາມາດສະຫລຸບໄດ້ວ່າ**: ສາເຫດອັນໜຶ່ງຂອງຄວາມທຸກຍາກຂອງປະຊາຊົນເຮົາ ແລະ ຄວາມດ້ອຍພັດທະນາຂອງປະເທດເຮົາແມ່ນມາຈາກການທໍາມາຫາກິນ, ການຜະລິດ, ການເຮັດວຽກທີ່ມີສະມັດຖະພາບບໍ່ສູງ; ປະຊາຊົນເຮົາຈໍານວນບໍ່ໜ້ອຍ ຍັງບໍ່ມີວຽກເຮັດງານທໍາທັງມີການຫວ່າງງານຕາມລະດູການ ຫລື ເຮັດວຽກບໍ່ເຕັມປ່ຽມຫລາຍພໍສົມຄວນ. ການຜະລິດ ແລະ ການເຮັດວຽກມີສະມັດຖະພາບຕໍ່າ ກໍ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ